ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

0964---

ເລກທີ /ຄພນ

ນະຄອນຫຼວງວຽງຈັນ, ວັນທີ 4 Jul 2011

ເຖິງ: ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ລາຍງານມູນຄ່າຈໍລະຈອນສິນຄ້າຂາຍຍ່ອຍ.

- ອີງຕາມ ແຈ້ງການກ່ຽວກັບການລາຍງານສະພາບລາຄາສິນຄ້າປະຈຳອາທິດ ແລະ ປະຈຳເດືອນ ສະບັບເລກທີ 1029/ອຄ.ຄພນ, ລົງວັນທີ 02/06/2011.

ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອເກັບກຳຂໍ້ມູນ "ມູນຄ່າຈໍລະຈອນສິນຄ້າຂາຍຍ່ອຍ" (ຕາຕະລາງ 4, 4.1 ແລະ 4.2 ໄດ້ຄັດຕິດມາພ້ອມນີ້) ຊຶ່ງແມ່ນຕາຕະລາງເພີ່ມເຕີມທີ່ໄດ້ກຳນົດໄວ້ໃນອັກສຸດທ້າຍ ຂໍ້1 ຂອງແຈ້ງການສະບັບເລກທີ 1029/ອຄ.ຄພນ, ລົງວັນທີ 02/06/2011:

1. ຕາຕະລາງ 4: ແມ່ນຕາຕະລາງສັງລວມມູນຄ່າຈໍລະຈອນສິນຄ້າຂາຍຍ່ອຍພາຍໃນແຂວງ, ນະຄອນຫຼວງ ຊຶ່ງພະແນກອຸດສາຫະກຳ ແລະ ການຄ້າແຂວງ ຕ້ອງໄດ້ສັງລວມຂໍ້ມູນການລາຍງານຂອງບັນດາຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເພື່ອລາຍງານໃຫ້ກົມການຄ້າພາຍໃນ ກ່ອນວັນທີ 15 ຂອງຕົ້ນເດືອນງວດຕໍ່ໄປ (ໝາຍເຖິງວັນທີ 15 ເດືອນ ເມສາ, ວັນທີ 15 ກໍລະກົດ, ວັນທີ 15 ຕຸລາ ແລະ ວັນທີ 15 ມັງກອນ).

2. ຕາຕະລາງ 4.1: ແມ່ນຕາຕະລາງສັງລວມມູນຄ່າຈໍລະຈອນສິນຄ້າຂາຍຍ່ອຍພາຍໃນເມືອງ ຊຶ່ງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຕ້ອງໄດ້ສັງລວມຂໍ້ມູນການລາຍງານມູນຄ່າການຈຳໜ່າຍສິນຄ້າຂອງບັນດາຫົວໜ່ວຍທຸລະກິດ, ຫ້າງຮ້ານຕ່າງໆ ທີ່ມີ ແລະ ບໍ່ມີ ທະບຽນວິສາຫະກິດ ເພື່ອລາຍງານໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ກ່ອນວັນທີ 10 ຂອງຕົ້ນເດືອນງວດຕໍ່ໄປ (ໝາຍເຖິງວັນທີ 10 ເດືອນ ເມສາ, ວັນທີ 10 ກໍລະກົດ, ວັນທີ 10 ຕຸລາ ແລະ ວັນທີ 10 ມັງກອນ).

ສ່ວນມູນຄ່າການຈຳໜ່າຍສິນຄ້າຂອງບັນດາຫ້າງຮ້ານທີ່ບໍ່ມີທະບຽນວິສາຫະກິດນັ້ນ ແມ່ນມອບໃຫ້ວິຊາການຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ປະເມີນມູນຄ່າໃຫ້ແທດເໝາະ ແລະ ໃກ້ຄຽງກັບຄວາມ ເປັນຈິງ.

3. ຕາຕະລາງ 4.2: ແມ່ນຕາຕະລາງລາຍງານການຈຳໜ່າຍສິນຄ້າຂອງຫົວໜ່ວຍທຸລະກິດ, ຫ້າງຮ້ານຕ່າງໆທີ່ມີທະບຽນວິສາຫະກິດ ຊຶ່ງເຈົ້າຂອງວິສາຫະກິດຈະຕ້ອງໄດ້ຈົດກ່າຍໃສ່ຕາຕະລາງ 4.2 ຕາມລາຍການສິນຄ້າທີ່ຕົນຈຳໜ່າຍຕົວຈິງ ເພື່ອລາຍງານໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ກ່ອນວັນທີ 30 ຂອງເດືອນ ທ້າຍງວດ. (ໝາຍເຖິງວັນທີ 30 ເດືອນມີນາ, ວັນທີ 30 ມິຖຸນາ, ວັນທີ 30 ກັນຍາ ແລະ ວັນທີ 30 ທັນວາ).